ພິທີການມອບແມວພັນສັດພື້ນບ້ານໃຫ້ແກ່ ເດັກນ້ອຍພິການ ແລະ ເດັກນ້ອຍແມ່ຍິງຊົນເຜົ່າດ້ອຍໂອກາດ ແລະ ໂຮງຮຽນປະຖົມວຽງຄຳໃນການສ້າງລາຍຮັບຢູ່ ບ້ານວຽງຄຳ ເມືອງຫີນເຫີບ ແຂວງວຽງຈັນ



ID:	Author:	Organization:	Created date:
89	ACDA	ACDA's	2020-06-16 00:00:00

1. ກ່ຽວກັບສະພາບບັນຫາທີ່ໂຄງການຢາກຈະແກ້ໄຂ / About the problem that project want to solve.

ສ້າງຄວາມເຂັ້ມແຂງໃຫ້ແກ່ການພັດທະນາເສດຖະກິດ - ສັງຄົມ ສຳ ລັບເດັກພິການ, ແມ່ຍິງພິການຊົນເຜົ່າຢູ່ ບ້ານວຽງຄຳ, ເມືອງຫີນ ເຫີບ, ແຂວງວຽງຈັນ.

2. ໂຄງການໄດ້ເຮັດຫຍັງແດ່ເພື່ອແກ້ໄຂບັນຫາ / About how the project solve the problems

- ເພື່ອສ້າງລາຍຮັບໃຫ້ແກ່ຄອບຄົວເດັກນ້ອຍພິການ ແລະ ຂະຫຍາຍໃຫ້ໃຫ້ຄອບຄົວອື່ນພາຍໃນກຸ່ມ, ລາຍຮັບທີ່ໄດ້ຈາກການ ຂາຍສັດພື້ນບ້ານສາມາດຊື້ອຸປະກອນການສຶກສາໃຫ້ເດັກນ້ອຍພິການບໍ່ໃຫ້ອອກໂຮງຮຽນກາງປີ ແລະ ບໍ່ເປັນພາລະໃຫ້ແກ່ຄອບ ຄົວ ແລະ ສັງຄົມ;
- ເພື່ອໃຫ້ໂຮງຮຽນສ້າງເປັນສວນສາທິດໃນການປູກ ແລະ ການລ້ຽງຊຶ່ງເດັກນ້ອຍພິການກັບເດັກນ້ອຍບໍ່ພິການອອກແຮງງານ ຮ່ວມກັນໂດຍບໍ່ມີການຈຳແນກ ແລະ ຜົນຜະລິດສາມາດໃຊ້ເປັນອາຫານເສີມຕອນທ່ຽງ.

3. ຜົນສຳເລັດຂອງໂຄງການ / Results of the project

- ຄອບຄົວເດັກນ້ອຍພິການ,ແມ່ຍິງຊົນເຜົ່າທີ່ດ້ອຍໂອກາດຈະມີລາຍຮັບຈາກການຂາຍສັດພື້ນບ້ານເພື່ອຊື້ອຸປະກອນການສຶກສາໃຫ້ລູກຂອງພວກເຂົາໄດ້ໄປໂຮງຮຽນ ບ່ອອກໂຮງຮຽນກາງປີ, ສັດພື້ນບ້ານທີ່ເກີດຂຶ້ນສາມາດຂະຫຍາຍໄປໃຫ້ຄອບຕົວອື່ນຕໍ່ໄປ ເພື່ອລ້ຽງສ້າງເປັນລາຍຮັບ;

- ໂຮງຮຽນຈະມີລາຍຮັບຈາກການປູກ ແລະ ການລ້ຽງສັດພື້ນບ້ານ, ຜົນຜະລິດສາມາດເອົາມາເຮັດອາຫານເສີມຕອນທ່ຽງໃຫ້ແກ່ເດັກນ້ອຍນັກຮຽນ, ສະໜອງເຄື່ອງຂຽນໃຫ້ແກ່ເດັກນ້ອຍນັກຮຽນ ແລະ ເປັນບ່ອນຮຽນຮູ້ທາງດ້ານການປູກ ແລະ ການລ້ຽງ ຂອງຊຸມຊົນ ແລະ ໂຮງຮຽນໃກ້ຄຽງ.

4. ປັດໄຈສູ່ຜົນສຳເລັດ / Factors of success

- ສັງເກດເຫັນວ່າ ໄດ້ເປີດໂອກາດ ໃຫ້ສະມາຊິກຄົນພິການພາຍໃນບ້ານວຽງຄຳ ໄດ້ມີທຶນຂະໜາດນ້ອຍເປັນໂຄງການທົດອົດຂອງບ້ານ ເພື່ອໃຫ້ສະມາຊິກຄົນພິການມີລາຍຮັບເຂົ້າໃນຄອບຄົວສາມາດລ້ຽງກຸ່ມຕົນເອງ ແລະ ຂັ້ນຂະຫຍາຍຕໍ່ໆໄປໄດ້

- ສະມາຊິກຄົນພິການແຕ່ລະຄົນໄດ້ມີການແລກປ່ຽນທອດຖອດບົດຮຽນການລ້ຽງ ເຊິ່ງກັນແລະກັນ

5. ຂໍ້ຈຳກັດທີ່ເຮັດໃຫ້ບໍ່ສຳເລັດຜົນໄດ້ດີ / Limitations

- ສະມາຊິກບາງຄອບຄົວບໍ່ເອົາໃຈໃສ່

- ລະດັບຄວາມຮູ້ຄວາມສາມາດແຕກຕ່າງກັນ ຈຶ່ງເຮັດໃຫ້ຄວາມຮູ້ບໍ່ເທົ່າກັນທາງດ້ານພາສາປາກເວົ້າ

6. ຂໍ້ແນະນຳສຳລັບຜູ້ທີ່ສົນໃຈຢາກທົດລອງນຳໃຊ້ / Recommendations for scaling up

ແຜນການປະຕິບັດງານນີ້ຈະສະໜັບສະໜຸນ ໂຄງການຂອງທີມ ACDA ສາມາດ ດຳເນີນການຈັດຕັ້ງປະຕິບັດເພື່ອສ້າງລາຍໄດ້ຂອງ ຄອບຄົວ CwDs, ເດັກຍິງຂອງເດັກຍິງຕະຫຼອດການຮ່ວມມືທີ່ດີຂອງແຕ່ລະພາກສ່ວນຂອງລັດຖະບານທ້ອງຖິ່ນໂດຍເຕັກນິກ ແລະ ງົບປະມານໂດຍໂຄງການທີມງານຂອງ ACDA ເພື່ອບັນລຸເປົ້າ ໝາຍ ແລະຈຸດປະສົງຂອງ PACE ໂຄງການ.








HERY